# PNEUMOCOCCAL POLYSACCHARIDE VACCINE
# ຢາສັກປ້ອງກັນ ໂຣກ ປອດອັກເສບ ແລະວັນນະໂຣກ

## ສິ່ງ ທີ່ ທ່ານ ຄວນ ຮູ້

## 1 ເປັນຫຍັງຈຶ່ງສັກຢາກັນໂຣກ ?

ໂຣກ ພີນີວໂມໂຄຄອນ ເປັນເຊື້ອໂຣກທີ່ອັນຕະຣາຍ ຊະນິດ ນຶ່ງຊຶ່ງທຳໃຫ້ຄົນເກີດປ່ວຍໄຂ້ແຮງ ຈົນເຖິງແກ່ຄວາມຕາຍ ໄດ້. ຕາມສະຖິຕິໄດ້ບັນທຶກໄວ້ວ່າ ເຊື້ອໂຣກ ພີນີວໂມໂຄ ຄອນ Pneumococcal ນີ້ທຳລາຍຊີວິດຄົນ ຢູ່ໃນ ສະຫາຣັຖອະເມຣິກາໃນແຕ່ລະປີເປັນຈຳນວນຫຼວງ ຫຼາຍ ກວ່າເຊື້ອໂຣກອື່ນໆທີ່ຄິດລວມກັນໝົດ. ທຸກຄົນ ກໍສາມາດ ທີ່ຈະຕິດໂຣກ ພີນີວໂມໂຄຄອນ Pneumococcal ນີ້ໄດ້. ເຖິງຢ່າງໃດກໍຕາມຍັງມີຄົນບາງຈຳພວກທີ່ສາມາດຈະ ຕິດ ໂຣກນີ້ໄດ້ງ່າຍ. ຄົນເຫຼົ່ານີ້ມີຄື ພວກຜູ້ເຖົ້າ ທີ່ມີອາຍຸ 65 ປີ ຫຼື ສູງກວ່ານັ້ນ, ພວກເດັກນ້ອຍ, ແລະພວກທີ່ມີ ບັນຫາ ທາງ ດ້ານສຸຂພາບຕ່າງໆເຊັ່ນ ເປັນໂຣກຕິດເຫຼົ້າ, ໂຣກ ຫົວໃຈ, ໂຣກປອດ, ໂຣກໝາກໄຂ່ຫຼັງ, ໂຣກເບົາ ຫວານ, ການມະໂຣກຕິດຕໍ່ HIV ຫຼື ໂຣກມະເລັງ ຊະນິດຕ່າງໆ.

ໂຣກ ພີນີວໂມໂຄຄອນ Pneumococcal ສາມາດກໍ່ໃຫ້ເກີດ ອາການອັກ ເສບ ທາງປອດໄດ້ ຄືໂຣກປອດບວມ, ມີພຍາດ ໃນເລືອດ, ອາການ ອັກເສບ ຂອງສະມອງ. ປະມານ 1 ໃນ 20 ຄົນ ທີ່ເສັຍຊີວິດ ຍ້ອນ ຕິດ ຈາກໂຣກ ພີນີວໂມໂຄຄອນ ນີ້. ປະມານ 2 ໃນ 10 ຄົນ ເກີດເປັນ ພຍາດໃນເລືອດ, ແລະ 3 ໃນ 10 ທີ່ເກີດເປັນໂຣກອັກເສບທາງສມອງ ຄົນຜູ້ທີ່ ມີບັນ ຫາທາງດ້ານສຸຂພາບດັ່ງທີ່ໄດ້ກ່າວໄວ້ຂ້າງ ເທິງນີ້ ຖ້າຫາກ ຕິດໂຣກນີ້ແລ້ວ ກໍມັກຈະເສັຍຊີວິດໄປ.

ຢາພີນີຊີລີນ Penicillin ເປັນຢາທີ່ມັກໃຊ້ໄດ້ຜົນໃນການ ປິ່ນປົວຮັກສາໂຣກນີ້. ແຕ່ພຍາດນີ້ກໍຊີນເຄີຍແລະ ຕ້ານທານ ຕໍ່ຢານີ້ມາສເມີ ແລະມັນກໍແຮ່ງທຳໃຫ້ການປິ່ນປົວ ຮັກສາ ໂຣກນີ້ຍາກຂຶ້ນກວ່າເກົ່າ. ດັ່ງນັ້ນການຮັກສາ ປ້ອງກັນ ກໍຍິ່ງເປັນການສຳຄັນທີ່ສຸດ.

## 2 ຢາສັກສຳຣັບ ໂຣກ pneumococcal polysaccharide (PPV)

ສາມາດສັກປ້ອງກັນເຊື້ອໂຣກທີ່ເກີດຈາກເຊື້ອໂຣກ ພີນີວໂມໂຄ ຄອນໄດ້ 23 ຊະນິດ. ຜູ້ໃຫ່ຍທີ່ມີສຸຂພາບສົມບູນ ເມື່ອສັກຢາປ້ອງກັນ ໂຣກ ແລ້ວມັນກໍສາມາດປ້ອງກັນໂຣກ ຕ່າງໆເຫຼົ່ານີ້ໄດ້ເກືອບໝົດ ພາຍໃນ 2-3 ອາທິດທີ່ສັກຢາ ກັນໂຣກນີ້. ພວກຜູ້ເຖົ້າ, ເດັກນ້ອຍທີ່ອາຍຸ ຕໍ່າກວ່າ 2 ປີ ແລະຜູ້ທີ່ມີໂຣກຊຳເຮື້ອທັງຫຼາຍ ອາດຈະສັກບໍ່ໄດ້ຜົນດີເທົ່າ ທີ່ຄວນ ຫຼື ອາດບໍ່ໄດ້ຜົນເລີຍ.

## 3 ໃຜຄວນທີ່ຈະສັກຢາກັນໂຣກນີ້ ?

- ພວກຜູ້ເຖົ້າທັງຫຼາຍທີ່ມີ ອາຍຸ 65 ປີ ຫຼື ແກ່ກວ່ານັ້ນ

- ທຸກຄົນທີ່ອາຍຸ ສູງກວ່າ 2 ປີ ທີ່ເປັນໂຣກຊໍາເຮື້ອມາດົນຄື:

  — ໂຣກຫົວໃຈ
  — ໂຣກປອດ
  — ພຍາດໃນເລືອດ
  — ໂຣກເບົາຫວານ
  — ໂຣກຕິດເຫຼົ້າ
  — ໂຣກຕັບແຂງ
  — ໂຣກນໍ້າມັນກະດູກແລະສມອງເຊື່ອມ

- ທຸກຄົນທີ່ມີອາຍຸ ສູງກວ່າ 2 ປີ ທີ່ມີພຍາດຕ່າງໆ ຫຼືມີສຸຂພາບ ບໍ່ສົມບູນທີ່ມີພູມຕ້ານທານພຍາດຕໍ່າທີ່ຈະເກີດຕິດເຊື້ອໂຣກໄດ້ງ່າຍເຊັ່ນ:

  — ໂຣກຕ່ອມນໍ້າເຫຼືອງອັກເສບຊໍາເຮື້ອ
  — ໂຣກກະດູກອ່ອນ, ໂຣກກະດູກພ່ອຍ
  — ໂຣກໝາກໄຂ່ບໍ່ທໍາງານ
  — ເນື້ອງອກທີ່ມີເຊລລ໌ທີ່ໂດຍປົກກະຕິໃນໄຂ່ກະດູກ
  — ກ່ຽວກັບໂຣກໝາກໄຂ່ຫຼັງອັກເສບ
  — ປ່ຽນໝາກອະວັຍະວະ
  — ການມະໂຣກຕິດຕໍ່ ຫຼື ມີເຊື້ອໂຣກແອັສ AIDS
  — ມ້າມບໍ່ທໍາງານ ຫຼື ບໍ່ມີມ້າມ

- ທຸກຄົນທີ່ອາຍຸ ສູງກວ່າ 2 ປີ ຜູ້ທີ່ພວມກໍາລັງໃຊ້ຢາຕ່າງໆ ຫຼືພວມໄດ້ຮັບການປິ່ນປົວ ເນື່ອງຈາກຮ່າງກາຍມີພູມ ຕ້ານທານພຍາດຕໍ່າເຊັ່ນ:

  — ເຄີຍໃຊ້ຢາ ສເຕີຣອຍ ມາດົນນານ
  — ໃຊ້ຢາປິ່ນປົວໂຣກມະເລັງບາງຊະນິດ
  — ໃຊ້ແສງຫຼື ສານຣັງສີ ສໍາຣັບປິ່ນປົວ

- ສໍາຣັບຄົນ ເຊື້ອຊາດ ອາລາສກັນ, ພວກເຊື້ອຊາດອາເມຣິກັນ ບາງ ຈໍາພວກ.

## 4 ຈະສັກຢາກັນໂຣກນີ້ຫຼາຍເທົ່າໃດ ?

ຕາມປົກກະຕິ ຄວນຈະສັກຢາກັນໂຣກນີ້ຊຸດນຶ່ງເທົ່ານັ້ນກໍພໍ.

ເຖິງຢ່າງໃດກໍຕາມ, ຖ້າມີຄວາມຈໍາເປັນທີ່ຈະຕ້ອງໄດ້ສັກຕື່ມ ທ່ານ ກໍອາດຈະສັກອີກເປັນຊຸດທີ່ສອງ.

- ສັກຢາກັນໂຣກຊຸດທີ່ສອງນີ້ ສ່ວນຫຼາຍມັກຈະແມ່ນພວກຜູ້ເຖົ້າທີ່ມີອາຍຸ 65 ປີ ຫຼື ແກ່ກວ່ານັ້ນ. ຜູ້ທີ່ເຄີຍສັກເທື່ອ ທໍາອິດ ເມື່ອລາວອາຍຸຍັງຕໍ່າກວ່າ 65 ປີ. ຖ້າຫາກວ່າລາວ ເຄີຍສັກມາແລ້ວ ຕັ້ງແຕ່ 5 ປີຫຼັງ ຫຼື ດົນກວ່ານັ້ນ.

- ສັກຢາ ກັນໂຣກ ອີກຄົນເທື່ອທີ່ສອງ ແມ່ນສັກໃຫ້ສໍາຣັບ ແຕ່ຄົນຜູ້ທີ່:
  — ມ້າມບໍ່ທໍາງານ ຫຼື ບໍ່ມີມ້າມ
  — ມີພຍາດໃນເລືອດ
  — ມີການມະໂຣກຕິດຕໍ່ ຫຼື ໂຣກ ແອັສ AIDS
  — ເປັນໂຣກມະເລັງ, ໂຣກກະດູກພ່ອຍ, ໂຣກກະດູກອ່ອນ, ໂຣກໝາກໄຂ່ຫຼັງ
  — ໝາກໄຂ່ຫຼັງບໍ່ທໍາງານ
  — ເນື້ອງອກທີ່ມີເຊລລ໌ທີ່ໂດຍປົກກະຕິໃນໄຂ່ກະດູກ
  — ເຄີຍປ່ຽນອະວັຍະວະຕ່າງໆ ຫຼື ເຄີຍ ປ່ຽນຕໍ່ກະດູກ
  — ພວມກໍາລັງໃຊ້ຢາທີ່ຊ່ອຍຕ້ານທານພູມຕ້ານທານຕໍ່ ພຍາດ ຕໍ່າ (ການໃຊ້ສານເຄມີ ຮັກສາໂຣກ, ຫຼື ໃຊ້ຢາ ສເຕີຣອຍ ມາດົນນານ)

ເດັກນ້ອຍທີ່ມີອາຍຸ 10 ປີ ຫຼື ອ່ອນກວ່ານັ້ນ ອາດຈະສັກຢາກັນໂຣກຊຸດທີ ສອງ ໃນ 3 ປີ ຫຼັງຈາກ ສັກຢາເທື່ອທໍາອິດ. ສໍາຣັບຜູ້ທີ່ອາຍຸ ສູງກວ່າ 10 ປີ ຄວນຈະສັກຢາກັນໂຣກນີ້ ໃນ 5 ຫຼັງຈາກສັກຢາເທື່ອທໍາອິດ

## 5 ຄວາມສຳຄັນ ໃນການສັກຢາກັນໂຣກນີ້ ?

- ເດັກນ້ອຍທີ່ສຸຂພາບສົມບູນ ແຕ່ມັກຈະເປັນເຈັບຫູ, ຕັນດັງ, ຫຼື ມີບັນຫາກ່ຽວກັບລະບົບຫາຍໃຈຕ່າງໆ ນັ້ນບໍ່ຈຳ ເປັນທີ່ຈະຕ້ອງສັກຢາ PPV. ເພາະເນື່ອງມີບັນຫາດັ່ງກ່າວນີ້.
- ຢາ PPV ນີ້ອາດຈະໃຊ້ບໍ່ໄດ້ຜົນດີກັບບາງຄົນ. ພິເສດສຸດ ສຳຣັບຜູ້ທີ່ພູມຕ້ານທານຕໍ່ພຍາດຕ່ຳ. ແຕ່ວ່າຄົນເຫຼົ່ານັ້ນ ກໍຄວນຈະສັກຢາປ້ອງກັນໄວ້ເພາະວ່າຄົນເຫຼົ່ານັ້ນຈະຕິດ ໂຣກ Pneumococcal ໄດ້ງ່າຍ ແລະເກີດ ປ່ວຍໄຂ້ ແຮງທີ່ສຸດ.
- ສຳຣັບຜູ້ຖືພາ:ຍັງບໍ່ທັນໄດ້ມີການຄົ້ນຄວ້າຮູ້ໄດ້ວ່າຜູ້ທີ່ຖື ພານັ້ນຈະມີຄວາມປອດພັຍພຽງໃດເມື່ອສັກຢານີ້.ແລະກໍ ຍັງບໍ່ທັນມີການຣາຍງານໃຫ້ເຫັນວ່າຢານີ້ເປັນອັນ ຕະຣາຍຢ່າງໃດ ຕໍ່ຜູ້ທີ່ຖືພາ ຫຼື ຕໍ່ເດັກທາຣົກໃນທ້ອງ, ຫຼືບໍ່ມີການສັ່ງຫ້າມປາມຢ່າງໃດທີ່ຈະບໍ່ໃຫ້ຜູ້ຍິງ ຖືພາສັກຢານີ້. ຜູ້ຍິງຊຶ່ງອາດ ຈະມີໂອກາດຕິດຈາກເຊື້ອໂຣກນີ້ໄດ້ງ່າຍ ຄວນຈະສັກຢາ ປ້ອງກັນໂຣກນີ້ໄວ້ ກ່ອນທີ່ລາວຈະຖືພາ. ຖ້າວ່າເປັນໄປໄດ້.

## 6 ສິ່ງທີ່ຈະເກີດຂຶ້ນຈາກ ການສັກຢາ ກັນໂຣກນີ້ມີຫຍັງແດ່ ?

ຢາ PPV ເປັນຢາທີ່ປອດພັຍດີ.

ເຄິ່ງນຶ່ງຂອງຈຳນວນຄົນທີ່ສັກຢານີ້ ອາດເກີດມີປະຕິກິຣິຍາ ເລັກນ້ອຍ ເຊັ່ນ ເກີດເປັນປ່ານແດງ, ເຈັບທີ່ບໍຣິເວນ ຖືກສັກຢານີ້.

ນ້ອຍ ກວ່າ 1% ຂອງຜູ້ທີ່ສັກຢານີ້ ເກີດເປັນໄຂ້, ເຈັບຕາມກ້າມເນື້ອ, ຫຼືເກີດມີອາການຕ່າງໆ. ການເກີດອາການ ແພ້ຕ່າງໆຮ້າຍແຮງນັ້ນ ບໍ່ຄ່ອຍຈະເຫັນມີຫຼາຍເທົ່າໃດ ສ່ວນໃຫ່ຍຈະບໍ່ຄ່ອຍເກີດມີອາການແພ້ທີ່ຮ້າຍແຮ

ການໃຊ້ຢານີ້ປົນກັນກັບຢາຊະນິດອື່ນໆ, ອາດຈະເປັນການ ສ່ຽງ ທີ່ຈະ ນຳໄປເຖິງການເກີດເປັນບັນຫາໃຫ່ຍ ອາດຈະ ເສັຍຊີວິດໄດ້ ຊຶ່ງອາດຈະເກີດຂຶ້ນຫຼັງຈາກສັກຢານີ້.

ຜົນສະທ້ອນອັນໃຫ່ຍຫຼວງທີ່ເກີດຂຶ້ນຈາກການຕິດພຍາດນັ້ນ ຮ້າຍແຮງກວ່າຜົນສະທ້ອນທີ່ເກີດຂຶ້ນປະຕິກິຣິຍາຂອງຢາທີ່ ສັກປ້ອງກັນ.

## 7 ຈະເປັນຢ່າງໃດ ຖ້າມີປະຕິກິຣິຍາ ທີ່ຮ້າຍແຮງເກີດຂຶ້ນ?

ຂ້າພະເຈົ້າຄວນຈະສັງເກດຈາກອັນໃດ?

- ເກີດອາການແພ້ຕ່າງໆທີ່ຮ້າຍແຮງ (ລົມພິດ, ຫາຍໃຈ ຍາກ, ສະລົບ)

ຂ້າພະເຈົ້າຈະເຮັດຢ່າງໃດ?

- ໂທຣສັບໄປຫາທ່ານໝໍ ຫຼື ເຂົ້າໄປພົບທ່ານໝໍ ທັນທີທັນໃດ
- ບອກເຫຼົ່າເຖິງສາຍເຫດທີ່ເກີດຂຶ້ນໃຫ້ທ່ານໝໍຟັງ, ວັນ ແລະເວລາ ທີ່ເກີດຂຶ້ນ, ວັນເວລາທີ່ທ່ານ ສັກຢາ ກັນໂຣກນັ້ນ.
- ຖາມນຳທ່ານໝໍ, ນາງພຍາບາລ, ຫຼື ກະຊວງ ສາທາຣະນະສຸກ ເຖິງໃບຄຳຮ້ອງທີ່ຈະປະກອບ ເພື່ອຈະ ໄດ້ຮັບ ການສັກຢາ ນີ້ ຊຶ່ງຮຽກວ່າ Vaccine Adverse Event Reporting Systems (VAERS), ຫຼື ທ່ານ ຈະໂທຣສັບໄປທີ່ VAERS ດ້ວຍຕົວທ່ານເອງ ທີ່ເບີໂທຣ 1-800-822-7967.

## 8 ຂ້າພະເຈົ້າຈະສຶກສາ ຄົ້ນຄວ້າ ໄດ້ຢ່າງໃດ ?

- ຖາມນຳທ່ານໝໍ, ຫຼື ນາງພຍາບາລ. ຖ້າຫາກວ່າ ເຂົາເຈົ້າພໍຈະໃຫ້ເອກກະສານຫຼືປຶ້ມຮຽນຮູ້ກ່ຽວກັບການ ສັກຢານີ້ໄດ້ແກ່ທ່ານ ຫຼື ເຂົາເຈົ້າມີຂໍ້ແນະນຳໃຫ້ໄປ ຊອກຫາ ເອົາຈາກບ່ອນໃດບ່ອນນຶ່ງ.

- ໂທຣສັບໄປຫາ ສຳນັກງານ ສາທາຣະນະສຸກ ປະຈຳເຂດຄຸ້ມບ້ານທ່ານ ຫຼື ປະຈຳຣັຖຂອງທ່ານ.

- ຕິດຕໍ່ໄປຍັງ ສຳນັກງານ ສູນກາງຄວບຄຸມ ແລະປ້ອງກັນໂຣກຕ່າງໆ (Centers for Disease Control and Prevention (CDC):

**Call 1-800-232-4636 (1-800-CDC-INFO)**

ຫຼື

ຕິດຕໍ່ທາງຂ່າວສານຂໍ້ມູນທາງຄອມພິວເຕີແມ່ນ
CDC website
http://www.cdc.gov.nip




CDC
CENTERS FOR DISEASE CONTROL AND PREVENTION
U.S. DEPARTMENT OF HEALTH & HUMAN SERVICES
Centers for Disease Control and Prevention
National Immunization Program